ກໍລະກົດ 2005 ເຫຼັ້ມ 1, ສະບັບ ທີ 1
JULY 2005 VOLUME 1, ISSUE 1

# ກະສິກຳ ອິນຊີ
# Organic Matters



## ໂປຣຟີວ (PROFIL) ແມ່ນຫຍັງ?

ໂຄງການສົ່ງເສີມ ກະສິກຳ ອິນຊີ ແລະ ການຕະຫຼາດ ຢູ່ ສ.ປ.ປ ລາວ ແມ່ນ ໂຄງການຮ່ວມມື ລະຫວ່າງ ກົມປູກຝັງ ແລະ ອົງການ ສະມະຄົມສະວິສ໌ ເພື່ອການຮ່ວມມືສາກົນ - Helvetas, ຊຶ່ງໂຄງການໄດ້ຕົ້ນແຕ່ ເດືອນ ມີນາ(3) ປີ 2004. ເປົ້າໝາຍຂອງໂຄງການແມ່ນ: "ເພື່ອປັບປຸງ ຊີວິດການ ເປັນຢູ່ຂອງປະຊາຊົນເຂດຊົນນະບົດຂອງລາວ, ເພື່ອສຸຂະພາບທີ່ດີຂອງຜູ້ບໍລິໂພກ, ການເຮັດ ກະສິກຳ ທີ່ນຳໃຊ້ຊັບພະຍາກອນ ທຳມະຊາດ ແບບຍືນຍົງ, ແລະການພັດທະນາ ເສດຖະກິດ ໂດຍຜ່ານການ ສົ່ງເສີມກະສິກຳອິນຊີ" ນະຄອນຫຼວງວຽງຈັນແມ່ນເຂດບູລິມະສິດ ທຳອິດທີ່ ເນັ້ນໃສ່ກິດຈະກຳການສົ່ງເສີມການຜະລິດ. ສ່ວນເຂດ ການຜະລິດອື່ນໆ ແມ່ນອີງຕາມ ການຂະຫຍາຍຕົວຂອງໂຄງການຕົວຈິງ.

## What is PROFIL?

The Promotion of Organic Farming and Marketing in Lao PDR project is a joint project of the Department of Agriculture and Helvetas-Swiss Association for International Cooperation which was initiated in March 2004. PROFIL's goal is "to contribute to improved living conditions in rural areas of the Lao PDR, the good health of consumers, the sustainable use of natural resources, and economic growth through the promotion of organic agriculture." The initial target area is Vientiane Capital. Production areas of organically producing farmers elsewhere in Lao PDR will be added as the project evolves.

## ກະສິກຳ ອິນຊີ ແມ່ນຫຍັງ?

ກະສິກຳ ອິນຊີ ໝາຍເຖິງ ລະບົບການຜະລິດ ທີ່ມີ ຄວາມຫຼາກຫຼາຍ ຊຶ່ງມີການຈັດການກັບ ສິ່ງແວດລ້ອມ ໃຫ້ມີຄວາມສຳພັນກັນກັບ ລະບົບນິເວດກະສິກຳ ໂດຍບໍ່ນຳໃຊ້ ຝຸ່ນເຄມີ ຫຼື ຢາປາບ ສັດຕູພືດ ເພື່ອເພີ້ມຄວາມອຸດົມສົມບູນຂອງດິນ, ສຸຂະພາບພືດ, ປ້ອງກັນແມງໄມ້ ແລະ ພະຍາດ ມາທຳລາຍ. ໂດຍທົ່ວໄປຈະເນັ້ນໃສ່ການໝູນໃຊ້ ແຫລ່ງວັດຖຸ ທີ່ມີຢູ່ພາຍໃນຟາມ (ເຊັ່ນ: ຫຍ້າ, ຝຸ່ນຄອກ, ຂີ້ແກບ, ເຟືອງ, ອື່ນໆ) ແລະ ຫລຸດຜ່ອນການນຳໃຊ້ ປັດໃຈຂາເຂົ້າກະສິກຳ.

## What is organic agriculture?

Organic agriculture refers to a diverse production system that manages ecological interactions within an agroecosystem without the use of chemical fertilizers or pesticides in order to promote and enhance soil fertility, plant health and to prevent pest and disease outbreaks. This holistic approach emphasizes the recycling of on-farm resources (fodder, manure, compost, rice husks) and minimizes the use of external inputs.

ວາລະສານ ລາຍໄຕມາດ ຈັດພິມໂດຍ ໂຄງການໂປຣພິວ. ວາລະສານ ສະບັບນີ້ ມີເປົ້າໝາຍ ໃນການນຳສະເໜີ ຂໍ້ມູນຂ່າວສານ ກ່ຽວກັບ ການຜະລິດ ແລະ ການຕະຫຼາດ ຂອງ ກະສິກຳ ອິນຊີ, ເປັນການສົ່ງເສີມ ຜະລິດຕະພັນ ກະສິກຳ ອິນຊີ ຂອງລາວ ແລະ ສະໜັບສະໜູນ ການແລກປ່ຽນ ແນວຄິດ ແລະ ປະສົບການ. ທີມງານ PROFIL ຍິນດີຕ້ອນຮັບ ຄຳຄິດເຫັນ, ຂໍ້ແນະນຳ ແລະ ການສະໜູນສະໜູນ ຂອງບັນດາ ທ່ານ. ກະລຸນາສົ່ງຄຳເຫັນ ຂອງທ່ານ ມາຕາມທີ່ຢູ່ ລຸ່ມນີ້: 193 ບ້ານ ໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງ ວຽງຈັນ, ສ.ປ.ປ ລາວ. ຕູ້ ປ.ນ 811
ໂທ/ ແຟກ: 856 21 26 31 89

This quarterly newsletter is published by PROFIL . The purpose of this newsletter is to provide production and marketing information about organic agriculture, to promote Lao organic products, and to serve as a venue for exchange of ideas and experiences. We welcome your comments, suggestions, and contributions.
193 Phonexay Village.
Saysetha District,
Vientiane Lao PDR
P.O. Box 811
Tel/Fax : 856 21 26 31 89
Email : **profil@laoprofil.org**
or **phouvong@laoprofil.org**

## ກິດຈະກຳຂອງໂຄງການໃນປີ 2005

**ດ້ານການຕະຫຼາດ**

- ສຳຫຼວດຂໍ້ມູນການຕະຫຼາດທັງພາຍໃນແລະ ຕ່າງປະເທດ
- ສ້າງຄວາມຮັບຮູ້ກ່ຽວກັບ ຜະລິດຕະພັນກະສິກຳ ອິນຊີໃຫ້ກັບ ຜູ້ບໍລິໂພກ ແລະ ຜູ້ຄ້າ
- ສະໜູນຜູ້ປະກອບການໃຫ້ເປີດຮ້ານຄ້າ ພາຍໃນ ແລະ ສົ່ງອອກ ຕ່າງປະເທດ

**ການຜະລິດ ແລະ ການເກັບກ່ຽວ**

- ເກັບກຳຂໍ້ມູນກ່ຽວກັບ ບັນຫາ, ທ່າແຮງ, ແລະ ໄຈ້ແຍກຄວາມ ຈຳເປັນ ຂອງການຄົ້ນຄ້ວາ
- ອຳນວຍຄວາມສະດວກໃຫ້ຊາວກະສິກອນສາມາດ ຮັບຊາບ ຂໍ້ມູນຂ່າວສານ, ການຝຶກອົບຮົມ,ປັດໃຈການຜະລິດ ແລະຕະຫຼາດ

**ການຝຶກອົບຮົມ**

- ພັດທະນາຄູ່ມື ສຳລັບການ ຝຶກອົບຮົມ
- ຈັດຫາ/ ສະໜັບສະໜູນ ການຝຶກອົບຮົມທັງພາຍໃນແລະ ຕ່າງປະເທດ ໃຫ້ ພະນັກງານ, ຊາວກະສິກອນ ແລະ ພໍ່ຄ້າ

**ຈັດຕັ້ງກຸ່ມຜູ້ທີ່ມີຄວາມສົນໃຈ**

- ອຳນວຍຄວາມສະດວກ/ ສະໜັບສະໜູນ ນຳສະເໜີ ແນວຄວາມຄິດ ຂອງກະສິກຳອິນຊີ ພ້ອມດ້ວຍຂໍ້ມູນຂອງ ກູ່ມຜູ້ຜະລິດ ໃນປະຈຸບັນ
- ສະໜັບສະໜູນການສ້າງກູ່ມຜູ້ຜະລິດ ແລະ ການສ້າງ ຕ່າໜ່າງ ລະຫວ່າງ ກູ່ມຜູ້ຜະລິດນຳກັນ

**ສູນຂໍ້ມູນ**

- ເກັບກຳ ແລະ ເຜີຍແຜ່ຂໍ້ມູນຂ່າວສານ
- ບຳລຸງຮັກສາ Webpage ແລະ ຖານຂໍ້ມູນ
- ຈັດກອງປະຊຸມແລກປ່ຽນ ແລະ ກອງປະຊຸມຕ່າງໆ

**ດ້ານລະບຽບການ**

- ພັດທະນາ ມາດຕາຖານກະສິກຳອິນຊີ
- ພັດທະນາ ແນວຄວາມຄິດສຳລັບການອອກໃບຢັ້ງຢືນ

## PROFIL activities 2005

**Marketing**

- Conduct market studies for domestic (fresh market) and international markets
- Raise awareness for organic products among consumers and traders
- Support selected traders in establishing domestic outlets and export markets

**Production and post harvest**

- Document production problems and potentials and identify research needs
- Facilitate producers access to information, training, inputs and markets

**Training**

- Generate training material
- Provide/support training for staff, producers and traders in-country and abroad

**Organising interest groups**

- Facilitate/support the introduction of organic concepts in existing producer groups
- Support the establishment and networking of organic farmers' groups

**Information platform**

- Collect and generate information
- Maintain web page and database
- Conduct exchange meetings and workshops

**Legal environment**

- Develop standards
- Develop a concept for certification

## ເຮັດແນວໃດ ເພື່ອຮັບປະກັນ ຜະລິດຕະພັນກະສິກຳ ອິນຊີ ?- ມາດຕາຖານ, ການຢັ້ງຢືນ, ເຄື່ອງໝາຍການຄ້າ



ໃນປະຈຸບັນຍັງບໍ່ທັນມີ ສະຖາບັນໃດໃນໂລກທີ່ສາມາດກວດວ່າ ຜົນຜະລິດໃດໜຶ່ງ ຜະລິດຕາມຫຼັກການ ກະສິກຳອິນຊີ ຫຼື ບໍ່. ດັ່ງນັ້ນ, ຂໍ້ກຳນົດ ຈຳນວນໜຶ່ງຈຶ່ງ ສ້າງຂຶ້ນເພື່ອເປັນເຄື່ອງມື ເພື່ອຮັບປະກັນຕໍ່ ຜູ້ບໍລິໂພກ ວ່າຜົນຜະລິດເປັນຜົນຜະລິດ ຈາກ ກະສິກຳອິນຊີແທ້. ລະບົບ ການຄວບຄູມ ຄຸນນະພາບ ອີງໃສ່ ບັນດາເຄື່ອງມື ດັ່ງລູ່ມນີ້:

**ມາດຕາຖານ -** ແມ່ນລະບຽບ ແລະ ຂໍ້ກຳນົດ ສຳລັບການຜະລິດ ແລະ ເກັບກ່ຽວ ຜົນຜະລິດ ກະສິກຳ ອິນຊີ.ຢູ່ໃນລະດັບສາກົນໄດ້ມີການ ນຳໃຊ້ ມາດຕາຖານ ກະສິກຳອິນຊີ ພື້ນຖານຂອງ IFOAM ຢ່າງແຜ່ຫຼາຍ ຊຶ່ງມັນໄດ້ສ້າງ ແນວທາງສຳລັບ ການຜະລິດ ແລະຂໍ້ກຳນົດທີ່ ຈະຕ້ອງ ປະຕິບັດ ໃນການຜະລິດ ກະສິກຳອິນຊີ

**ການຢັ້ງຢືນ -** ແມ່ນຂັ້ນຕອນທີ່ ໜ່ວຍງານອອກໃບຢັ້ງຢືນ ລົງກວດກາຟາມ ຫຼື ບໍລິສັດ ແລະຮັບຮອງ ເປັນລາຍລັກອັກສອນ ວ່າ ການຜະລິດ ແລະ ການແປຮູບ ໄດ້ປະຕິບັດ ຕາມ ມາດຕາຖານ ກະສິກຳ ອິນຊີ

**ເຄື່ອງໝາຍ** - ເມື່ອໄດ້ໃບຢັ້ງຢືນ, ຜົນຜະລິດ ກະສິກຳອິນຊີ ຈະຕ້ອງຕິດ ສັນຍາລັກການໄດ້ຮັບການຢັ້ງຢືນຢູ່ສະເໝີເພື່ອເປັນເຄື່ອງໝາຍຊີ້ວ່າ ເປັນຜະລິດຕະພັນ ກະສິກຳອິນຊີ. ເຄື່ອງໝາຍການຄ້າ ແລະ ສັນຍາລັກ ກະສິກຳອິນຊີ ແມ່ນເປັນເຄື່ອງມື ທາງການຕະຫຼາດ ທີ່ມີຄວາມສຳຄັນ ຊຶ່ງມັນຈະສະໜັບສະໜູນ ການອອກສູ່ຕະຫຼາດຜະລິດຕະພັນ ກະສິກຳອິນຊີ ແລະຊ່ວຍໃຫ້ຂາຍໄດ້ລາຄາດີກວ່າຖ້າທຽບກັບຜະລິດຕະພັນ ອື່ນໆ







## How do you guarantee organic? Standards, certification, labels

There are no reliable laboratory tests available which can ascertain whether a product is produced following organic methods or not. Therefore, certain instruments are required to guarantee the customer that the product is genuine. The quality control system is based on:

- ***Standards*** - Set of rules and requirements for the production and post harvest process.
  Internationally the most widely used organic standards are the IFOAM - International Federation of Organic Agriculture Movements ***Basic Standards*** which outline production methods and rules to be applied for organic production.
- ***Certification*** - Procedure in which a certification body assesses a farm or company and assures in writing that specified standards for production and processing are met.
- ***Labels*** - Once certified, the organic product will usually be marketed carrying a certification mark indicating that the products are certified organic. Labels and certification marks are important marketing tools which provide access to organic markets and help to achieve a better price compared to conventional products.



### ຄໍາແນະນໍາດ້ານວິຊາການ: ການນໍາຝຸ່ນຄອກ ມາເຮັດເປັນ ຝຸ່ນບົ່ມ ໂບກາຊິ

ສ່ວນປະສົມ: ຝຸ່ນຄອກແຫ້ງ 1 ສ່ວນ, ຮໍາ 1 ສ່ວນ, ຂີ້ແກບ 1ສ່ວນ, ອີເອັມ 100 ຊີຊີ, ກາກນໍ້າຕານ 100 ຊີຊີ ແລະ ນໍ້າ 10 ລິດ.

ວິທີເຮັດ: ປະສົມ ຝຸ່ນຄອກ, ຮໍາ ແລະ ຂີ້ແກບ ແລ້ວຄົນໃຫ້ເຂົ້າກັນດີ. ລະລາຍ ກາກນໍ້າຕານ, ອີເອັມ ໃສ່ນໍ້າ (ມາດຕາສ່ວນ 1:1:100) ແລ້ວ ໃສ່ບົວທົດໃສ່ສ່ວນປະສົມແຫ້ງໃຫ້ທົ່ວ ແລະ ສະໝໍ່າສະເໝີ. ຈົນກ່ວາສ່ວນປະສົມ ຈະມີຄວາມຊຸ່ມ ປະມານ 30%. ເຮົາສາມາດກວດຄວາມຊຸ່ມຂອງຝຸ່ນ ໂດຍວິທີດັ່ງນີ້: ໃຫ້ກໍາຝຸ່ນ ຂຶ້ນມາ 1 ກໍາ ແລ້ວກໍາເຂົ້າໃຫ້ແໜ້ນ, ຖ້າຫາກມີ ນໍ້າໄຫຼ ອອກມາຕາມງ່າມນິ້ວມື ສະແດງວ່າ ຄວາມຊຸ່ມກາຍ 30% ເຮົາຄວນປະສົມຝຸ່ນແຫ້ງຕື່ມອີກ. ຖ້າ ຫາກວ່າ ບໍ່ມີນໍ້າໄຫຼອອກມາ ແຕ່ເວລາ ປະມືອອກ ກ້ອນສ່ວນປະສົມ ຫາກແຕກອອກ ສະແດງວ່າ ຄວາມຊຸ່ມບໍ່ຮອດ 30%.

ກອງສ່ວນປະສົມ ຢູ່ບ່ອນທີ່ແຫ້ງ ໃຫ້ມີຄວາມສູງ ປະມານ 15-20 ຊັງຕີແມັດ ແລ້ວ ນະກະເປົາປ່ານ ມາປົກ. ໃນໄລຍະເວລາບົ່ມ,ຄວນຈະ ຮັກສາອຸ່ນຫະພູມ ໃຫ້ຢູ່ປະມານ 35-40 ອົງສາ. ຄວນກວດກາ ອຸ່ນຫະພູມ ຂອງກອງຝຸ່ນຢູ່ສະເໝີ, ຖ້າຈໍາເປັນຄວນປີ້ນກອງຝຸ່ນເພື່ອໃຫ້ໄດ້ ຮັບອາກາດເພີ້ມ.

ເມື່ອກອງຝຸ່ນ ໂບກາຊິ ບົ່ມໄດ້ລະດັບ ແລະພ້ອມທີ່ຈະນໍາໄປໃຊ້ ມັນຈະມີກິ່ນຫອມ ແລະ ມີເສັ້ນໃຍສີຂາວຂອງເຊື້ອລາຂຶ້ນຢູ່ດ້ານເທີງ ຂອງກອງຝຸ່ນ. ແຕ່ຖ້າມັນມີກິ່ນສົ້ມ ຫຼື ມີກິ່ນເໝັນ ສະແດງວ່າ ຝຸ່ນ ຍັງບໍ່ທັນເປັນ ແລະ ບໍ່ສາມາດນໍາໄປໃຊ້ໄດ້.

## Technical tips - How to make bokashi compost with animal manure

**Ingredients:**

Animal manure – 1 parts
Rice bran – 1 part
Rice husk – 1 part
EM and Molasses mix – 100 cc EM, 100cc molasses, 10 liters water

**Preparation**

Mix the dry ingredients well. Dissolve EM and molasses in water (dilution of 1:1:100) and spray solution onto the dry ingredients with a watering can.
Mix well until the moisture content lies within 30%. You can test the moisture content by taking a handful of the mixture and squeezing. If water comes out than moisture is higher than 30% and so it needs more mixing. If not water comes out and when you open your fingers the ball of mixture breaks than moisture is less than 30%.
Heap the mixture on a dry floor to a height of 15-20 cm and cover with a gunny (jute) bag. During fermentation, the temperature needs to be maintained between 35-40 degrees C. Hence regular checking of temperatures and mixing for aeration, if required, is recommended.
The bokashi is ready for use when it has a sweet fermented smell and white filamentous fungi on the surface. If it has a sour or foul odour, the material is not fit for use.

***Upcoming Events:***

If you would like an event posted in this newsletter please send the information to: **profil@laoprofil.org** or call: 856 21 263189

## ຫຼັກການລວມ ຂອງ ການຜະລິດ ກະສິກຳອິນຊີ

**Principles of organic agriculture**

- ຮັກສາແລະເພີ້ມຄວາມອຸດົມສົມບູນໃຫ້ດິນ ໃນໄລຍະຍາວ
- Maintain and increase the long-term fertility of the soil
- ຮັກສາວົງຈອນຊີວະພາບພາຍໃນຟາມ,ໂດຍສະເພາະແມ່ນວົງຈອນ ທາດອາຫານພືດ
- Enhance biological cycles within the farm, especially nutrient cycles
- ເພີ້ມທາດອາສິດໃນດິນໂດຍການປູກພືດຕະກູນຖົ່ວ
- Provide nitrogen supply by intensive use of nitrogen fixing plants
- ນຳໃຊ້ພືດຊີວະພາບປ້ອງກັນແທນທີ່ ຈະແກ້ໄຂ
- Biological plant protection based on prevention instead of curing
- ປູກແລະລ້ຽງສັດພ້ອມກັນຫຼາຍຊະນິດທີ່ເໝາະສົມກັບສະພາບຂອງທ້ອງຖິ່ນ
- Diversity of crop varieties and animal species, appropriate to the local conditions
- ການລ້ຽງສັດຕ້ອງມີສະຖານທີ່ພຽງພໍກັບຄວາມຕ້ອງການ ຂອງສັດລ້ຽງ
- Animal husbandry appropriate to the needs of the animals
- ຫ້າມນຳໃຊ້ສານເຄມີສັງເຄາະເຊັ່ນ:ຝຸ່ນ, ຢາປາບສັດຕູພືດ, ຮໍໂມນ ແລະ ສານເລັ່ງຕ່າງໆ
- Ban on synthetic chemical fertilizers, plant protection, hormones and growth regulators
- ຫ້າມນຳໃຊ້ວິສະວະພັນທຸກາໍ ແລະ ຜະລິດຕະພັນຂອງມັນ
- Prohibition of Genetic Engineering and its products (GMO)
- ຫ້າມນຳໃຊ້ສານເຄມີ ຫຼື ວິທີການຜະລິດທີ່ເປັນ ອັນຕະລາຍເຂົ້າໃນຂະບວນ ການແປຮູບອາຫານ
- Ban on synthetic or harmful methods, processing aids and ingredients in food processing

Market in Pakse, April 2005



Illustrations are taken from the sourcebook 'Improving livelihoods in the uplands of Lao PDR' produced by NAFRI and NUOL in 2005. The sourcebook is a collection of articles describing best practices and lessons learned in upland resource management. For copies of the sourcebook contact Bandith Ramangkoun at **bandith@nafri.org.la**

